ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 22 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 26.9.2012

ກະຊວງ ກະສິກຳ-ປ່າໄມ້
ເລກທີ.....3218
ວັນທີ 26...9...12
ເວລາ..............

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ ກ່ຽວກັບການແນະນຳປະຕິບັດ ຂໍ້ທີ 10.1 ຂອງຂໍ້ຕົກລົງ ສະບັບເລກທີ 32/ນຍ, ລົງວັນທີ 6 ມິຖຸນາ 2012

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ.

- ອີງຕາມ ໝວດທີ IV, ມາດຕາ 2 ( ໃໝ່ ), ຂໍ້ທີ 8, ຂອງກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ຂໍ້ທີ 10.1, ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 32/ນຍ, ລົງວັນທີ 06 ມິຖຸນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26 ມັງກອນ 2012

ເນື່ອງຈາກວ່າການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ໃນໄລຍະຜ່ານມາຍັງມີບາງຂະແໜງການ ແລະ ທ້ອງຖິ່ນເຂົ້າໃຈເນື້ອໃນ ຂໍ້ທີ 10.1 ວ່າຕ້ອງໃຫ້ປັບປຸງຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ກ່ອນ, ຈຶ່ງລົບລ້າງຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ, ລົງວັນທີ 02 ພຶດສະພາ 2008 ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ລົງວັນທີ 24 ກຸມພາ 2009, ບາງພາກສ່ວນກໍ່ຍັງສືບຕໍ່ສະເໜີ ແລະ ປະຕິບັດ ຕາມຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ຊຶ່ງເຫັນວ່າເປັນຄວາມເຂົ້າໃຈ ແລະ ປະຕິບັດບໍ່ຖືກຕ້ອງ.

ເພື່ອໃຫ້ບັນດາກະຊວງ ແລະ ອົງການກ່ຽວຂ້ອງຂອງລັດຖະບານ ກໍ່ຄືອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ຈັດຕັ້ງປະຕິບັດເນື້ອໃນຂໍ້ທີ 10.1 ຂອງຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 32/ນຍ, ລົງວັນທີ 06 ມິຖຸນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26 ມັງກອນ 2012 ມີຄວາມເປັນເອກະພາບ ແລະ ມີຄວາມສັກສິດ.

### ນາຍົກລັດຖະມົນຕີ ອອກຄຳສັ່ງ:

1/. ລົບລ້າງຄຳສັ່ງເພີ່ມເຕີມ ສະບັບເລກທີ 09/ນຍ, ລົງວັນທີ 02 ພຶດສະພາ 2008 ວ່າດ້ວຍການແກ້ໄຂບັນຫາໄມ້ຍຶດ, ໄມ້ຮິບໂຮມ ແລະ ໄມ້ເຫຼືອອ່ອນທີ່ຄົງຄ້າງ ແລະ ຂໍ້ຕົກລົງ ສະບັບເລກທີ 23/ນຍ, ລົງວັນທີ 24 ກຸມພາ 2009 ວ່າດ້ວຍການອະນຸຍາດໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ສົ່ງໄມ້ແປຮູບທີ່ເປັນໄມ້ຄຸ້ມຄອງ 1,2,3 ແລະ ຕໍ່ໄມ້ອອກຕ່າງປະເທດ, ນັບແຕ່ມື້ຂໍ້ຕົກລົງ ສະບັບເລກທີ 32/ນຍ ມີຜົນສັກສິດເປັນຕົ້ນ

ໄປ ໝາຍຄວາມວ່າ ຂໍ້ຕົກລົງ ສະບັບເລກທີ 32/ນຍ ໄດ້ລົບລ້າງນິຕິກຳ 2 ສະບັບດັ່ງກ່າວຢ່າງສິ້ນເຊີງ ແລະ ຖືວ່ານິຕິກຳ 2 ສະບັບດັ່ງກ່າວບໍ່ມີຜົນສັກສິດແລ້ວ.

2/. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າປັບປຸງບາງຈຸດທີ່ບໍ່ທັນຮັດກຸມໃນຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22/09/2008 ໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳກ່ຽວຂ້ອງ ແລະ ສະພາບຄວາມເປັນຈິງເພື່ອໃຫ້ໄດ້ປະກາດໃຊ້ໂດຍໄວ.

3/. ໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຢ່າງເຂັ້ມງວດ ແລະ ດ້ວຍຄວາມຮັບຜິດຊອບສູງ.

4/. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ